ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
--------===ooo===--------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5.
ຖະໜົນ: ໄກສອນພົມວິຫານ, ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທລະສັບ: (+856 21)418062 – 6

ນະຄອນຫຼວງວຽງຈັນ,ວັນທີ: 30 ທັນວາ 2022

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ໄດ້ຮັບ 2 ລາງວັນ ການເປີດເຜີຍຂໍ້ມູນດີເດັ່ນ ປະຈຳປີ 2022 (LSX Disclosure Award 2022)







ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ໄດ້ເຂົ້າຮ່ວມ ພິທີມອບ-ຮັບການເປີດເຜີຍຂໍ້ມູນດີເດັ່ນ ປະຈຳປີ 2022 (LSX Disclosure Award 2022), ທີ່ ຕະຫຼາດຫລັກຊັບລາວ ຊັ້ນ 8. ເວລາ 9:00-11:30ໂມງ. ເຊິ່ງ ເປັນງານມອບລາງວັນ ສຳຫລັບບໍລິສັດຈົດທະບຽນໃນຕະຫຼາດຫລັກຊັບລາວ ທີ່ມີຜົນງານດີເດັ່ນເລື່ອງການເປີດເຜີຍຂໍ້ມູນ ຕາມປະເພດຕ່າງໆ.

ເຊິ່ງໃນປີນີ້ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ໄດ້ຮັບໃບຍ້ອງຍໍ ຈຳນວນ 2 ລາງວັນໄດ້ແກ່:

1. **ໃບຍ້ອງຍໍ ການເປີດເຜີຍຂໍ້ມູນດີເດັ່ນປະເພດ I ປະຈຳປີ 2022.**
2. **ໃບຍ້ອງຍໍ ການເປີດເຜີຍຂໍ້ມູນດີເດັ່ນແບບສະໝັກໃຈ ປະຈຳປີ 2022.**

ທ່ານຜູ້ອຳນວຍການໃຫ່ຍຕະຫລາດຫລັກຊັບລາວ **ທ່ານ ສຸພັກ ຖິ່ນໄຊພອນ** ໃຫ້ກຽດເປັນຜູ້ມອບລາງວັນ ໃນ ຄັ້ງນີ້ແກ່ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ຕ່າງໜ້າຮັບໂດຍ **ທ່ານ ມານີ ຕຣິລິກວິໄລ** ຜູ້ອຳນວຍການໃຫ່ຍ **ມຫທຊ.**



ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ເປັນບໍລິສັດໜຶ່ງທີ່ໃສ່ໃຈເລື່ອງການເປີດເຜີຍຂໍ້ມູນການດຳເນີນ ການ ແລະ ການເຄື່ອນໄຫວທຸລະກິດຕ່າງໆ ຂອງບໍລິສັດ ໃຫ້ແກ່ມວນຊົນ ແລະ ນັກລົງທຶນ ຢ່າງຄົບຖ້ວນ ຈະແຈ້ງ ແລະ ທັນເວລາ.